ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທຄຕລ BCEL **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່ ເລກທີ 3156...../ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ 10 OCT 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍສິນຄ້າເຄື່ອງທີ່ລະນຶກ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາເຄື່ອງທີ່ລະນຶກ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາຜະລິດເຄື່ອງທີ່ລະນຶກ ປະຈຳປີ 2026 ໃຫ້ ທຄຕລ ດັ່ງມີລາຍການລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ / ຮູບພາບ |
|---|---|---|
| 1 | **ຄັນຮົ່ມກ້ານສັ້ນສອງພັບ (21")**<br>- ຜ້າ Pongee ເຄືອບກັນ UV ສີປອນເງິນ, ໂຄງໄຟເບີ້, ພິມສີຕາມ Artwork.<br>- ດ້າມຈັບ: ພຼາສຕິກ, ປຸ່ມກົດເປີດ<br>- ສາຍຮັດ: ແບບຕິດ<br>- ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ<br>- ການຫຸ້ມຫໍ່: 10 ກ້ານ/ກັບ, 05 ກັບ/ແກັດ. | **14,000 ກ້ານ**<br> |
| 2 | **ຄັນຮົ່ມກ້ານຍາວ (24")**<br>- ຜ້າ 190T Polyester ເຄືອບກັນ UV ສີປອນເງິນ, ໂຄງໄຟ<br>- ເບີ້, ພິມສີຕາມ Artwork.<br>- ດ້າມຈັບ: ພຼາສຕິກ, ປຸ່ມກົດເປີດ<br>- ສາຍຮັດ: ແບບຕິດ<br>- ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ<br>- ການຫຸ້ມຫໍ່: 10 ກ້ານ/ກັບ, 02 ກັບ/ແກັດ. | **9,000 ກ້ານ**<br> |
| 3 | **ຄັນຮົ່ມຕັ້ງພື້ນ (45")**<br>- ຜ້າຄູນິລອນ, ໂຄງເຫຼັກໂຄມ້ຽມ (Chromium), ພິມສີຕາມ Artwork.<br>- ຂາຕັ້ງ 4 ຂາ ຊຸບໂຄມ້ຽມ<br>- ການຫຸ້ມຫໍ່: 1 ກ້ານ/ແກັດ | **1,800 ຊຸດ**<br> |
| 4 | **ກະຕິກໃສ່ນ້ຳກ້ອນ 8L**<br>- Plastic KC-1400 ຂະໜາດ 22*33*23.7 cm<br>- ພິມສີຕາມ Artwork. | **3,300 ໜ່ວຍ**<br> |

| | | |
|---|---|---|
| 5 | **ຜ້າກັນເປື້ອນ**<br>- ພິມສີຕາມ Artwork.<br>- ການຫຸ້ມຫໍ່: 10 ຜືນ/ມັດ, 10 ມັດ/ແກັດ. | **16,300 ຜືນ**<br> |
| 6 | **ຈອກແກ້ວ 1 ໜ່ວຍ/ກັບ**<br>- ຈອກແກ້ວໃສ.<br>- ແຂບຄຳຢູ່ປາກຈອກ, ສະກຼີນໂລໂກ້ສີຄຳ 01 ຈຸດ (ກັນຮອຍຂູດຂີດ)<br>- ບັນຈຸໃສ່ກ່ອງເຈ້ຍສີແດງ (ກ່ອງລູກຟູບ), ພິມ BCEL ສີທອງ<br>- ການຫຸ້ມຫໍ່: 50 ໜ່ວຍ/ແກັດ. | **15,500 ໜ່ວຍ**<br> |
| 7 | **ຈອກ ເກັບອຸນຫະພູມ**<br>- Tumbler 30 Oz/900 ml<br>- ທາງໃນເປັນສະແຕນເລດ SUS 304<br>- Laser engraving (LOGO).<br>- ສີລີໂຄນກັນມື່ນ-ສີແດງ.<br>- ບັນຈຸໃສ່ກ່ອງເຈ້ຍສີແດງ (ກ່ອງລູກຟູບ), ພິມ Logo ສີຂາວ<br>- ການຫຸ້ມຫໍ່: 50 ໜ່ວຍ/ແກັດ. | **8,300 ໜ່ວຍ**<br> |
| 8 | **ຖົງຜ້າ**<br>- ຖົງຜ້າປ່ານ ຂະໜາດ 27*37*10 cm, ຊັບຜ້າດ້ານໃນ.<br>- ຫູຫິ້ວໜັງ, ຍາວ 17 cm.<br>- ໃສ່ດຸມແຕັບ<br>- ພິມສີ Logo 02 ດ້ານ ຕາມ Artwork.<br>- ການຫຸ້ມຫໍ່: 10 ຖົງ/ມັດ, 5 ມັດ/ແກັດ. | **15,700 ຖົງ**<br> |
| 9 | **ຖົງເຈ້ຍ ທຄຕລ**<br>- ເຈ້ຍ 210 ແກຣມ ເຄືອບ PVC 1 ໜ້າ; ຂະໜາດ 28*12*35 cm;<br>- ຫູຫິ້ວເຊືອກແດງສອງເສັ້ນ, ຍາວ 12 cm.<br>- ພື້ນຮອງດ້ວຍເຈ້ຍແຂງໜາ;<br>- ພິມສີຕາມ Artwork;<br>- ການຫຸ້ມຫໍ່: 10 ຖົງ/ມັດ, 10 ມັດ/ແກັດ. | **23,000 ຖົງ**<br> |
| 10 | **ປື້ມບັນທຶກ**<br>- ຂະໜາດ A5, ໃສ່ຢ່ວງຂາວເຕັມເຫຼັ້ມ.<br>- ປົກແດງໜ້າ-ຫຼັງ (15.5* 21. 5 cm) ເຈ້ຍກາກົງ ເບີ 24 ພິມສີດ້ານ, ປົກຫຼັງພິມສອງໜ້າ.<br>- ເຈ້ຍທາງໃນ: ເຈ້ຍປອນຂາວ 14.8 * 21 cm, ໜາ 80 ແກຼມ ຈຳນວນ 200 ໜ້າ (100 ໃບ) ບໍ່ລວມໜ້າປົກ, ດ້ານໃນພິມໂລໂກ້ ທຄຕລ ຕາມ Artwork.<br>- ການຫຸ້ມຫໍ່: 20 ຫົວ/ແກັດ. | **16,000 ຫົວ**<br> |

| | | |
|---|---|---|
| 11 | **ບິກຂຽນ**<br>- ນ້ຳມຶກສີຟ້າ, ຫົວປາກກາ 0,5 mm.<br>- ພິມສີຕາມ Artwork;<br>- ການຫຸ້ມຫໍ່: 50 ກ້ານ/ກັບ, 20 ກັບ/ແກັດ. | **51,500 ກ້ານ**  |
| 12 | **ພັດລົມມືຖື**<br>- ຂະໜາດ 5,000 mAh, Ice-Magnetic Cooling Technology.<br>- ພິມ LOGO ຕາມ Artwork.<br>- ການຫຸ້ມຫໍ່: 50 ອັນ/ແກັດ. | **2,200 ອັນ**  |
| 13 | **ຈອກແກ້ວ 4 ໜ່ວຍ/ກັບ**<br>- ຈອກແກ້ວໃສ.<br>- ແຂບຄຳຢູ່ປາກຈອກ, ສະກຼີນໂລໂກ້ສີຄຳ 01 ຈຸດ (ກັນຮອຍຂູດຂີດ)<br>- ບັນຈຸໃສ່ກັບເຈ້ຍສີແດງ-ແຂງ, ສະກຼີນໂລໂກ້ສີທອງ 01 ຈຸດ<br>- ການຫຸ້ມຫໍ່: 10 ກັບ/ແກັດ. | **7,000 ກັບ**<br>**(28,000 ໜ່ວຍ)**  |
| 14 | **ຊຸດຈອກນ້ຳຊາ**<br>- ຈານຮອງ ແລະ ຈອກ ຢ່າງລະ 2 ໜ່ວຍ/ກັບ.<br>- ສະກຼີນໂລໂກ້ສີຄຳ (ກັນຮອຍຂູດຂີດ) 2 ດ້ານ-ຕາມ Artwork.<br>- ບັນຈຸໃສ່ກັບສີແດງ, ສະກຼີນໂລໂກ້ສີທອງ 01 ຈຸດ<br>- ການຫຸ້ມຫໍ່: 10 ກັບ/ແກັດ. | **2,500 ກັບ**  |
| 15 | **ຄັນຮົ່ມສອງຊັ້ນ (30")**<br>- ຜ້າ: 190T Polyester ເຄືອບກັນ UV ສີປອນເງິນ, ໂຄງໄຟເບີ້, ພິມສີຕາມ Artwork.<br>- ດ້າມຈັບ: ພຼາສຕິກ, ປຸ່ມກົດມືເປີດ<br>- ສາຍຮັດ: ແບບຕິດ<br>- ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ<br>- ການຫຸ້ມຫໍ່: 30 ກ້ານ/ກັບ. | **3,700 ກ້ານ**  |

**ໝາຍເຫດ:**

1. ສາມາດເຂົ້າມາເບິ່ງຕົວຢ່າງ ຫຼື ຫາກຕ້ອງການຟາຍຮູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງທີ 28/10/2025 ໃນໂມງລັດຖະການ.
2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກ ແຍກເປັນແຕ່ລະລາຍການ.
3. ການຄັດເລືອກຜູ້ສະໜອງແມ່ນ ຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **<u>ເອກະສານຊອງທີ 1</u>**:
  1.1 ປະກອບເອກະສານໃນນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈຳປີ 2022, 2023, 2024 (ຕ້ອງເປັນບໍລິສັດທີ່ເຂົ້າລະບົບອາກອນມູນຄ່າເພີ່ມ).
  1.2 ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມ

ຕ້ອງການໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).

1.3 ເອກະສານ ຂໍ້ 1.1 ແລະ 1.2 ແມ່ນສົ່ງຟາຍ pdf ເຂົ້າ Email: procurement@bcel.com.la, **ສິນຄ້າຕົວຢ່າງ (ສະເປັກຖືກຕ້ອງພ້ອມສະກຼີນຕາມ Artwork BCEL) ທີ່ຈະເຂົ້າຮ່ວມປະມູນ** ແມ່ນໃຫ້ມາສົ່ງກ່ອນ ວັນພຸດ, ທີ 29/10/2025 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນຄານ, ທີ **11/11/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.

2.3 ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄໍ້າປະກັນທີ່ອອກ ໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/01/2026) ຫຼື ແຊັກທີ່ວີຊ່າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສືຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສົ່ງສິນຄ້າໃຫ້ ທຄຕລ ຖືກຕ້ອງຄົບຖ້ວນ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄໍ້າປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

**<u>ໝາຍເຫດ</u>**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 50 ວັນ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນ ມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ແຂວງ ສປປ ລາວ ນະຄອນ ຫຼວງ ວຽງຈັນ

ນ. ສາຍສະໝອນ ຈັນທະຈັກ

ຕິດຕໍ່ສອບຖາມຂໍ້ມູນເພີ່ມຕື່ມ:
021 213200 ຕໍ່ 414

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງ ສິ່ງພິມໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ (ທີ່ຈະເຂົ້າປະມູນໃນຄັ້ງນີ້) | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ) | .... ປີ | ສົ່ງຕົວຢ່າງ....ວັນ<br>ສົ່ງທັງໝົດ....ວັນ | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ...........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

ລູກຄ້າທົ່ວໄປ + ພະນັກງານ




# 03

## ຄັນຮົ່ມພັບ (ສັ້ນ) 21 ນິ້ວ

- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ

### ຄຸນລັກສະນະ ແລະ ອອກແບບ

- ✓ ສະກຣີນ ໂລໂກ້ BCEL: 18x18cm
- ✓ ສະກຣີນ App BCEL One: 15x15cm
- ✓ ສະກຣີນ ຕົວໜັງສື “BCEL”: 12x3.6cm

ລູກຄ້າທົ່ວໄປ + ພະນັກງານ




# 04

## ຄັນຮົ່ມຍາວ 24 ນີ້ວ

- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ

### ຄຸນລັກສະນະ ແລະ ອອກແບບ

- ✓ ສະກຣີນ ໂລໂກ້ BCEL: 18x18cm
- ✓ ສະກຣີນ App BCEL One: 15x15cm
- ✓ ສະກຣີນ ຕົວໜັງສື “BCEL”: 12x3.6cm




ລູກຄ້າທົ່ວໄປ

# 05

## ຄັນຮົ່ມໃຫຍ່

- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ
- ✓ ໃນຕະຫຼາດ ຮ້ານຄ້າທົ່ວໄປ
- ✓ ຮ້ານຄ້າຕົວແທນ
- ✓ ລູກຄ້າທົ່ວໄປ

### ຄຸນລັກສະນະ ແລະ ອອກແບບ

- ✓ ສະກຣີນ ໂລໂກ້ BCEL: 18x18cm
- ✓ ສະກຣີນ ໂລໂກ້ BCOME: 18x18cm
- ✓ ສະກຣີນ Icon OnePay: 15x15cm
- ✓ ສະກຣີນ App BCEL One: 15x15cm
- ✓ ສະກຣີນ ຕົວໜັງສື “BCEL”: 12x3.6cm




ລູກຄ້າທົ່ວໄປ

# 06

## ກະຕິກນ້ຳກ້ອນ (ນ້ອຍ)

8 ລິດ ລຸ້ນ KC-1400

ຂະໜາດ: ກວ້າງ **20** X ຍາວ **33** X ສູງ **23.7** ຊມ

- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ
- ✓ ໃນຕະຫຼາດ ຮ້ານຄ້າທົ່ວໄປ
- ✓ ຮ້ານຄ້າຕົວແທນ
- ✓ ລູກຄ້າທົ່ວໄປ

### ຄຸນລັກສະນະ ແລະ ອອກແບບ

- ✓ ສະກຣີນ ໂລໂກ້ BCEL white: 5x5cm




# 07

## ຜ້າກັນເປື້ອນ

- ✓ ໃສ່ໂລໂກ້ BCEL + OnePay
- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ
- ✓ ໃນຕະຫຼາດ ຮ້ານຄ້າທົ່ວໄປ
- ✓ ຮ້ານຄ້າຕົວແທນ
- ✓ ລູກຄ້າທົ່ວໄປ

**ຄຸນລັກສະນະ ແລະ ອອກແບບ**

- ✓ ສະກຣີນ ໂລໂກ້ BCEL white: 8x8cm

ລູກຄ້າທົ່ວໄປ + ພະນັກງານ

8.2 cm




9.5 cm




# 08

## ຈອກແກ້ວ

ຂະໜາດ 10 ອອນ 9.5x8.2cm

- ✓ ປ້ຳໂລໂກ້ ທຄຕລ ສີທອງ
- ✓ ຂອບປາກແກ້ວ ສີທອງ
- ✓ ບັນຈຸໃສ່ກ່ອງ ສີແດງ ເຈາະໃສດ້ານ 1
- ✓ ຂະໜາດກ່ອງຕາມເໝາະສົມ

### ຄຸນລັກສະນະ ແລະ ອອກແບບ

- ✓ ຈອກແກ້ວ ເທິງຈອກ ປ້ຳໂລໂກ້ BCEL ສີທອງຄຳ : 3.5x3.5cm
- ✓ ກ່ອງແດງ ເຈາະໃສ ແລະ ສະກຣີນ ຄຳວ່າ BCEL









ລູກຄ້າທົ່ວໄປ + ພະນັກງານ

# 09

# ຈອກນ້ຳ ເກັບອຸນຫະພູມ tumbler

## 30oz/900ml

- ✓ ຈອກນ້ຳ ເກັບອຸນຫະພູມ ຄວາມເຢັນ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ

## ຄຸນລັກສະນະ ແລະ ອອກແບບ

- ✓ Stainless Steel 304
- ✓ ປະລິມານບັນຈຸ: 30 ອອນ oz.
- ✓ ສະກຣີນ ໂລໂກ້ BCEL white: 2.5x2.5cm




ລູກຄ້າທົ່ວໄປ + ພະນັກງານ

# 10

## ຖົງຜ້າ

✓ ຖົງຜ້າປ່ານ ເພື່ອບັນຈຸໃສ່ ຂອງແຈກຕ່າງໆ
✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ
✓ ມີດຸມແຕັບ

**ຄຸນລັກສະນະ ແລະ ອອກແບບ**

✓ Screen Laser **ໂລໂກ້ BCEL**
✓ **ສີທອງ** 2 **ດ້ານ**
✓ **ຂະໜາດ** 3.5x3.5cm

ລູກຄ້າທົ່ວໄປ + ພະນັກງານ




# 11

## ຖົງເຈ້ຍ

✓ ເພື່ອບັນຈຸໃສ່ຂອງແຈກຕ່າງໆ ໃນກິດຈະກຳ ທາງການຕະຫຼາດ

**ຄຸນລັກສະນະ ແລະ ອອກແບບ**

✓ **Screen:**
- ດ້ານ 1ໂລໂກ້ ທຄຕລ
- ດ້ານ 2 QR website BCEL




ລູກຄ້າທົ່ວໄປ + ພະນັກງານ

# 12

## ປຶ້ມ

- ✓ ປຶ້ມ ສໍາລັບຂຽນ
  - ຂະໜາດປົກ 15.5 x 21.5 cm
  - ຂະໜາດເຈ້ຍ A5 (14.8 x 21 cm)

### ຄຸນລັກສະນະ ແລະ ອອກແບບ

- ✓ ສະກີນໂລໂກ້ BCEL ສີຂາວ: 3.5x3.5cm
- ✓ ປົກຫຼັງດ້ານໃນ ຈະມີ ມີຂໍ້ມູນຕິດຕໍ່ ສນຍ ແລະ ສາຂາ ທົ່ວລະບົບ
- ✓ ປົກຫຼັງດ້ານນອກ ຈະມີຂໍ້ມູນຕິດຕໍ່ ທຄຕລ

ລູກຄ້າທົ່ວໄປ + ພະນັກງານ




# 13

## ບິກ

- ✓ ບິກ
- ✓ ນ້ຳມຶກຟ້າ
- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ

**ຄຸນລັກສະນະ ແລະ ອອກແບບ**

- ✓ ສະກີນໂລໂກ້ ທຄຕລ ພ້ອມຄຳວ່າ BCEL







ລູກຄ້າທົ່ວໄປ

# 14

# ພັດລົມນ້ອຍ ແບບພົກພາ

- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ
- ✓ ນິຍົມໃນປະຈຸບັນ, ສະດວກພົກພາ
- ✓ ໄວໜຸ່ມ ນັກສຶກສາ ພະນັກງານທົ່ວໄປ

**ຄຸນລັກສະນະ ແລະ ອອກແບບ**

- ✓ ສະກີນ ຄຳວ່າ BCEL

ລູກຄ້າ VIP+ລູກຄ້າທົ່ວໄປ+ພະນັກງານ




# 15

## Giftset

- ✓ Giftset ສຳລັບແຈກລູກຄ້າ VIP

- ຄຸນລັກສະນະ ແລະ ອອກແບບ
- ✓ ກ່ອງສີແດງ ສະກິນໂລໂກ້ ທຄຕລ ສີທອງ
- ✓ ຈອກແກ້ວ 4 ໜ່ວຍ



ລູກຄ້າ VIP

# 16

## Giftset Premium
## ຈອກເຊັດນ້ຳຊາ

✓ **Giftset Premium ສຳລັບແຈກລູກຄ້າ VIP**

- **ຄຸນລັກສະນະ ແລະ ອອກແບບ**

✓ **ສະກີນໂລໂກ້ ທຄຕລ ສີທອງ:**

- ດ້ານເທິງ ກ່ອງ
- ດ້ານເທິງ ຈານຮອງ
- ຈອກແກ້ວ 2 ດ້ານ

✓ ລວດລາຍເປັນ ສີທອງລ້ວນ

✓ ປະກອບມີ ຈອກ 2 ໜ່ວຍ

✓ ຖ້ວຍຮອງ 2 ໜ່ວຍ







## ລູກຄ້າ VIP

# 17

## ຄັນຮົ່ມກ໊ອບ 2 ຊັ້ນ

30 ນິ້ວ

- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ

**ຄຸນລັກສະນະ ແລະ ອອກແບບ**

- ✓ Print Screen
- ✓ ໂລໂກ້ **ທຄຕລ**
- ✓ Icon App **BCEL One**
- ✓ ຕົວໜັງສື **BCEL**